**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເມືອງໄຊສະຖານ
ຫ້ອງການ ອຸດສາຫະກຳ-ການຄ້າ ເມືອງ

ເລກທີ...100..../ຫອຄ.ຊຖ
ໄຊສະຖານ, ວັນທີ 16. ພຶດສະພາ, 2022

# ແຈ້ງການ

**ເຖິງ:** ບັນດາຫົວໜ່ວຍທຸລະກິດ ສົ່ງເສີມ ກະສິກຳ ພາຍໃນເມືອງ ໄຊສະຖານ.
**ເລື່ອງ:** ການສະໝັກ ຂໍທຶນສົມທົບສຳລັບພັດທະນາທຸລະກິດກະສິກຳ ຈາກໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ).

- ອີງຕາມ ຂໍ້ຕົກລົງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0274/ອຄ, ລົງວັນທີ 10 ມີນາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງ.
- ອີງຕາມ ແຜນດຳເນີນງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) ປີ 2022.

ຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງ ໄຊສະຖານ ໃນນາມ ຄູ່ຮ່ວມການຈັດຕັ້ງປະຕິບັດ ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) ໃນເມືອງ ໄຊສະຖານ ມີຈຸດປະສົງ ແຈ້ງມາຍັງ ບັນດາ ຫົວໜ່ວຍທຸລະກິດ ກ່ຽວການສົ່ງເສີມ ການຜະລິດ ກະສິກຳ ແລະ ປ່າໄມ້ ເປັນສິນຄ້າ ຊາບວ່າ: ໂຄງການ ມີ **ກອງທຶນສົມທົບສຳລັບພັດທະນາທຸລະກິດກະສິກຳ** ແມ່ນເປັນໜຶ່ງໃນບັນດາກົນໄກການຈັດຕັ້ງປະຕິບັດໂຄງການທີ່ມີເປົ້າໝາຍເພື່ອເຮັດໃຫ້ຕ່ອງໂສ້ມູນຄ່າ ເພື່ອ ເຮັດໃຫ້ ກຸ່ມ ຜູ້ດຳເນີນກິດຈະກຳ ທີ່ໂຄງການສະໜັບສະໜູນ ສາມາດເຂົ້າເຖິງຕະຫຼາດ ທີ່ດີກວ່າເກົ່າ ແລະ ປັບປຸງການເຂົ້າເຖິງການບໍລິການຂອງທຸລະກິດ, ໂດຍຜ່ານ ຫົວໜ່ວຍທຸລະກິດດັ່ງກ່າວ, ໂດຍໂຄງການຈະໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນແກ່ຫົວໜ່ວຍທຸລະກິດກະສິກຳ ທີ່ມີ **ຄວາມສົນໃຈ** ແລະ ສະມັກເຂົ້າຮ່ວມຄັດເລືອກ ຂໍທຶນສະໜັບສະໜູນ ຂອງໂຄງການ

ບັນດາຫົວໜ່ວຍທຸລະກິດທີ່ມີຄວາມສົນໃຈສະໝັກຂໍທຶນ ແມ່ນສາມາດພົວພັນ ແລະ ຂໍຂໍ້ມູນລາຍລະອຽດ ກ່ຽວກັບຂັ້ນຕອນ ແລະ ເງື່ອນໄຂການສະໝັກຂໍທຶນໄດ້ທີ່ ຫ້ອງການອຸດສາຫະກຳ-ການຄ້າເມືອງ ໄຊສະຖານ, ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ໄຊສະຖານ (ຫ້ອງການປະສານງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ).

❖ ສຳລັບຂັ້ນເມືອງແມ່ນປ່ອຍທຶນສົມທົບຫົວໜ່ວຍທຸລະກິດຂະໜາດຄົວເຮືອນ ແລະ ຂະໜາດນ້ອຍ.

ເງື່ອນໄຂຫົວໜ່ວຍທຸລະກິດກະສິກຳມີດັ່ງນີ້:

1. ມີຄວາມສົນໃຈຢາກເຮັດວຽກຮ່ວມກັບໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ).
2. ຫົວໜ່ວຍທຸລະກິດມີການຈັດທະບຽນທີ່ຖືກຕ້ອງຕາມກົດໝາຍ.
3. ຫົວໜ່ວຍທຸລະກິດທີ່ມີໃບແຈ້ງເສຍອາກອນ ແລະ ໃບຢັ້ງຢືນການເສຍອາກອນ.
4. ຫົວໜ່ວຍທຸລະກິດມີການດຳເນີນກິດຈະການຫຼາຍກວ່າ 3 ປີ.
5. ຫົວໜ່ວຍທຸລະກິດມີຄວາມສາມາດ, ປະສົບການໃນການສົ່ງເສີມທຸລະກິດກະສິກຳ ແລະ ການເຊື່ອມໂຍງກັບຊາວກະສິກອນສູ່ຕະຫຼາດ (ການເຊັນສັນຍາເກັບຊື້ການຜະລິດ).

6. ສຳລັບທຶນສົມທົບຂະໜາດນ້ອຍ ຖ້າຫົວໜ່ວຍຄົວເຮືອນໃດທີ່ມີຄວາມຕ້ອງການລິເລີ່ມທຸລະກິດໂດຍສະເພາະສະມາຊິກກຸ່ມຜະລິດແມ່ນສາມາດສະໝັກໄດ້ໂດຍເຂົ້າໄປປຶກສາຫາລືກັບທີມງານ ຫຼື ຫ້ອງການອຸດສາຫະກຳ-ການຄ້າເມືອງ.
7. ໄລຍະເວລາປະກາດ 15 ວັນ, ເລີ່ມແຕ່ວັນທີ 16/5/2022 ຫາວັນທີ 31/5/2022.

ສະນັ້ນ, ທາງຫ້ອງການອຸດສາຫະກຳ-ການຄ້າເມືອງ ຈຶ່ງອອກແຈ້ງການສະບັບນີ້ເຖິງທ່ານທີ່ມີຄວາມສົນໃຈ

ຫ້ອງການອຸດສາຫະກຳ-ການຄ້າ ເມືອງໄຊສະຖານ

ຕິດຕໍ່ໄດ້ທີ່:
- ປະສານງານໂຄງການຂັ້ນເມືອງ ໂທ:020 59789488
- ຫ້ອງການອຸດສາຫະກຳ-ການຄ້າ ໂທ:020 94383555

ນ. ນຸດດາວັນ ມະໄລຄຳ